**Curriculum on Basic Skills in legal profession**
**for enforcement and court judgement (Laos)**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 1
## General knowledge on the roles of the enforcement and court judgement organ
## ຄວາມຮູ້ທົ່ວໄປກ່ຽວກັບອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານ

### 1. ສະພາບລວມກ່ຽວກັບວຽກງານປະຕິບັດຄຳຕັດສິນຂອງສານ ຢູ່ ສປປ ລາວ

ພາຍຫຼັງທີ່ພັກປະຊາຊົນປະຕິວັດລາວໄດ້ວາງແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ ແລະ ມີຫຼັກການແຕ່ ປີ 1986 ເປັນຕົ້ນມາ, ລັດແຫ່ງສປປລາວໄດ້ຫັນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍມະຕິຄຳສັ່ງໄປສູ່ການຄຸ້ມຄອງດ້ວຍລັດຖະທຳມະນູນ ແລະ ກົດໝາຍເທື່ອລະກ້າວຊຶ່ງເປັນວິທີການປົກຄອງທີ່ສອດຄ່ອງກັບຫຼັກການລວມຂອງການປົກຄອງລັດໃນຍຸກປັດຈຸບັນ ແລະ ສອດຄ່ອງກັບຄວາມມຸ່ງມາດປາດຖະໜາຂອງປະຊາຊົນບັນດາເຜົ່າ. ສະນັ້ນ, ເພື່ອເປັນເຄື່ອງມືໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ, ນັບແຕ່ທ້າຍປີ 1989 ມາຮອດເດືອນມັງກອນ 2014 ນີ້ລັດສປປລາວໄດ້ປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍຫຼາຍກວ່າ 100 ສະບັບ, ຊຶ່ງໄດ້ເປັນບ່ອນອີງສຳຄັນໃຫ້ແກ່ການຄຸ້ມຄອງສັງຄົມໃນ ສປປ ລາວ, ອັນໄດ້ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍເປັນກ້າວໆມາ; ສ້າງຄວາມເຊື່ອໝັ້ນໃຫ້ແກ່ປະຊາຊົນບັນດາເຜົ່າຕໍ່ບົດບາດການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ, ສາມາດດຶງດູດນັກລົງທຶນທັງພາຍໃນ ແລະ ຕ່າງປະເທດເຂົ້າມາລົງທຶນຢູ່ປະເທດ ຢູ່ ສປປ ລາວນັບມື້ເພີ່ມຂ›ນເປັນລຳດັບ, ປະກອບສ່ວນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດ, ສ້າງພື້ນຖານໃຫ້ແກ່ການເຊື່ອມໂຍງກັບບັນດາປະເທດໃນພາກພື້ນແລະສາກົນ.

ການຈັດຕັ້ງປະຕິບັດຄຳຕັດສິນຂອງສານເປັນຂັ້ນຕອນສຸດທ້າຍຂອງການດຳເນີນຄະດີຕາມຂະບວນຍຸຕິທຳຢູ່ ສປປລາວ ຊຶ່ງໄດ້ຜ່ານຂັ້ນຕອນການສຶກສາອົບຮົມໄກ່ເກ່ຍໂດຍອົງການປົກຄອງຂັ້ນຮາກຖານ, ເຈົ້າໜ້າທີ່ຕຳຫຼວດ, ເຈົ້າໜ້າທີ່ໄອຍະການ, ສານປະຊາຊົນ, ແຕ່ຄູ່ກໍລະນີບໍ່ສາມາດຕົກລົງກັນໄດ້ດ້ວຍການປະນີປະນອມກັນແລະໃນທີ່ສຸດສານປະຊາຊົນຕ້ອງໄດ້ລົງຄຳຕັດສິນ, ຄຳພິພາກສາຕາມຂໍ້ມູນຫຼັກຖານ, ຕາມຂໍ້ບັນຍັດທີ່ກຳນົດໄວ້ໃນກົດໝາຍເກີດມີຜູ້ຊະນະແລະຜູ້ເສຍຕາມກົດເກນການຕໍ່ສູ້ຄະດີ. ໃນນີ້, ຜູ້ຊະນະຄະດີກໍເລັ່ງທວງໃຫ້ປະຕິບັດຕາມຄຳຕັດສິນຫຼືຄຳພິພາກສາຂອງສານເພື່ອທວງເອົາສິດແລະຜົນປະໂຫຍດຂອງຕົນທີ່ຖືກລະເມີດຫຼືສູນເສຍໄປ, ກົງກັນຂ້າມຜູ້ເສຍຄະດີແມ່ນບໍ່ພໍໃຈຕໍ່ຄຳຕັດສິນຫຼື

ຄຳພິພາກສາຂອງສານດ້ວຍເຫດຜົນແລະຂໍ້ອ້າງຕ່າງໆຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດຕົວຈິງພົບຄວາມຫຍຸ້ງຍາກສັບສົນທີ່ສຸດ, ທັງມີຜົນກະທົບໂດຍກົງຕໍ່ສິດແລະຜົນປະໂຫຍດຂອງລັດ, ລວມໝູ່ແລະບຸກຄົນ, ກາຍເປັນປາກົດການຫຍໍ້ທໍ້ໜຶ່ງໃນສັງຄົມຢູ່ ສປປ ລາວ ທີ່ມີຜົນກະທົບຕໍ່ບົດບາດການນຳພາຂອງພັກ ແລະ ຄວາມສັກສິດໃນການຄຸ້ມຄອງລັດດ້ວຍກົດໝາຍໃນຢູ່ ສປປ ລາວ.

ໂດຍປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຕາມທີ່ກົດໝາຍກຳນົດໄວ້, ອົງການປະຕິບັດຄຳຕັດສິນຂອງສານກໍໄດ້ຍົກສູງຄວາມຮັບຜິດຊອບໃນການນຳເອົາຄຳຕັດສິນ, ຄຳພິພາກສາຂອງສານແລະນິຕິກຳອື່ນໆມາຈັດຕັ້ງປະຕິບັດຕາມຂັ້ນຕອນ, ວິທີການແລະມາດຕະການທີ່ກຳນົດໄວ້ໃນກົດໝາຍ, ສາມາດເກັບກູ້ຊັບສິນ, ເງິນຄຳກໍ່ຄືທວງເອົາສິດແລະຜົນປະໂຫຍດມາໃຫ້ລັດ, ລວມໝູ່ແລະບຸກຄົນເປັນຈຳນວນຫຼວງຫຼາຍອັນໄດ້ເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃຫ້ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍແລະຍຸຕິທຳເປັນເທື່ອລະກ້າວ. ເຖິງຢ່າງໃດກໍຕາມ, ເມື່ອທຽບໃສ່ໜ້າທີ່ການເມືອງທີ່ພັກ ແລະ ລັດໄດ້ມອບໝາຍໃຫ້, ຄວາມຮຽກຮ້ອງຕ້ອງການຂອງສັງຄົມແລະຈຳນວນຄຳຕັດສິນ ແມ່ນມີທ່າອ່ຽງເພີ່ມຂຶ້ນ, ເມື່ອຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດແລ້ວອົງການປະຕິບັດຄຳຕັດສິນຂອງສານຕ້ອງເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງນຳມາຈັດຕັ້ງປະຕິບັດໃຫ້ຖືກຕ້ອງ, ເຂັ້ມງວດ ແລະ ສັກສິດເພື່ອເກັບກູ້ຫຼືທວງເອົາສິດ ແລະ ຜົນປະໂຫຍດຂອງຜູ້ຖືກເສຍຫາຍຫຼືຖືກລ່ວງລະເມີດມາໃຫ້ເຂົາເຈົ້າ. ໃນພາກປະຕິບັດຕົວຈິງ, ອົງການປະຕິບັດຄຳຕັດສິນຂອງສານກໍໄດ້ມີຄວາມມານະພະຍາຍາມປະຕິບັດຕາມຂັ້ນຕອນ, ວິທີການແລະມາດຕະການທີ່ກົດໝາຍກຳນົດເພື່ອນຳເອົາຄຳຕັດສິນ, ຄຳພິພາກສາຂອງສານມາຈັດຕັ້ງປະຕິບັດ, ແຕ່ກໍບໍ່ສາມາດຈັດຕັ້ງປະຕິບັດໄດ້ຢ່າງຄົບຖ້ວນຖືກຕ້ອງອັນເນື່ອງມາຈາກຫຼາຍສາເຫດທັງນອກຕົວແລະໃນຕົວ. ໃນນີ້, ສາເຫດຕົ້ນຕໍແມ່ນພວກເຮົາຍັງບໍ່ທັນເຊື່ອມຊຶມ, ຮັບຮູ້ເຂົ້າໃຈເປັນເອກະພາບຕໍ່ເນື້ອໃນຂອງລັດຖະທຳມະນູນທີ່ໄດ້ກຳນົດວ່າ: " ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນທຸກອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມແລະພົນລະເມືອງທຸກຄົນຕ້ອງເຄົາລົບ, ບຸກຄົນ ແລະ ອົງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງຕ້ອງປະຕິບັດຢ່າງເຂັ້ມງວດ"[1].

ກົດໝາຍວ່າດ້ວຍຈັດຕັ້ງປະຕິບັດຄຳຕັດສິນຂອງສານຂອງ ສປປ ລາວ ສະບັບປັບປຸງ ປີ 2008 ໄດ້ກຳນົດຢ່າງຈະແຈ້ງກ່ຽວກັບລະບົບອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານນັບແຕ່ສູນກາງລົງຮອດທ້ອງຖິ່ນ, ບັນດາຄຳຕັດສິນຂອງສານໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບ ແລະ ມີບ່ອນອີງທີ່ໜັກແໜ້ນ, ກົດໝາຍສະບັບດັ່ງກ່າວນີ້ປັດຈຸບັນກໍຍັງໄດ້ຈັດຕັ້ງປະຕິບັດຢູ່ ສປປ ລາວ ແລະ ກຳລັງມີການປັບປຸງເພື່ອໃຫ້ສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມຢູ່ ສປປ ລາວ, ຖ້າມີການປັບປຸງສຳເລັດ ແລະ ປະກາດໃຊ້ຢ່າງເປັນທາງການ, ໃນນາມຂ້າພະເຈົ້າທີ່ເປັນອາຈານສອນວິຊາດັ່ງກ່າວຈະອັບເດດຂໍ້ມູນດັ່ງກ່າວນັ້ນຕື່ມ.

---

[1] ທ່ານ ບຸນທາ ຊົງເຢີທ່າວ, ບົດວິທະຍານິພົນທົດສະດີການເມືອງ ແລະ ການປົກຄອງ ລະບົບຊັ້ນສູງ ສົກສຶກສາ, ປີ 2014, ໜ້າ 1.

## 2. ຄວາມໝາຍ

**ກ່ອນອື່ນພວກເຮົາຕ້ອງແຍກໃຫ້ໄດ້ຄຳວ່າ: " ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ"** ແລະ **" ອົງການປະຕິບັດຄຳຕັດສິນຂອງສານ"** ເພາະສອງປະໂຫຍກນີ້ມີຄວາມໝາຍແຕກຕ່າງກັນ ຫຼື ເວົ້າຢ່າງໜຶ່ງເອີ້ນວ່າ "ອົງການມະຫາພາກ" ແລະ "ອົງການຈຸລະພາກ".

ຢູ່ ສ ປປ ລາວ "ອົງການມະຫາພາກ" ແມ່ນອົງການຈັດຕັ້ງທີ່ເຮັດວຽກໃນການຄຸ້ມຄອງບັນດາຂະແໜງການວິຊາສະເພາະທີ່ຂຶ້ນກັບຕົນ, ຊຶ່ງຈະບໍ່ໄດ້ເປັນຜູ້ຈັດຕັ້ງປະຕິບັດເອງ, ສ່ວນ "ອົງການຈຸລະພາກ" ເປັນອົງການທີ່ຈັດຕັ້ງປະຕິບັດວຽກງານວິຊາສະເພາະໂດຍກົງຕາມພາລະບົດບາດ ຫຼື ເວົ້າຢ່າງໜຶ່ງແມ່ນລົງມືເຮັດຕາມການມອບໝາຍຂອງຂັ້ນເທິງ.

- **ຄວາມໝາຍຂອງອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ**

ອົງການຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນອົງການມະຫາພາກ ມີພາລະບົດບາດໃນການຊີ້ນຳ ແລະ ຄຸ້ມຄອງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານທາງດ້ານວິຊາການ, ການເມືອງ-ແນວຄິດ, ການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກໃຫ້ມີຄວາມເປັນເອກະພາບ, ວ່ອງໄວ, ຖືກຕ້ອງ, ໂປ່ງໃສ ແລະ ຍຸຕິທຳບົນຫຼັກການ ແລະ ລະບຽບການກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ. ຊຶ່ງປະກອບດ້ວຍ: ກະຊວງຍຸຕິທຳ, ພະແນກຍຸຕິທຳແຂວງ, ນະຄອນຫຼວງ, ຫ້ອງການຍຸຕິທຳເມືອງ, ນະຄອນ,ເທດສະບານ[2].

- **ຄວາມໝາຍຂອງອົງການປະຕິບັດຄຳຕັດສິນຂອງສານ**

ອົງການປະຕິບັດຄຳຕັດສິນຂອງສານແມ່ນອົງການຈຸລະພາກ ທີ່ຂຶ້ນກັບພະແນກຍຸຕິທຳແຂວງ, ນະຄອນຫຼວງ, ຫ້ອງການຍຸຕິທຳເມືອງ, ນະຄອນ, ເທດສະບານ ເຮັດໜ້າທີ່ໂດຍກົງໃນການຈັດຕັ້ງປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ແລະ ນິຕິກຳອື່ນ ຕາມທີ່ກຳນົດໄວ້ໃນ ມາດຕາ 5 ຂອງ ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂອງ ສປປ ລາວ ຊຶ່ງປະກອບດ້ວຍ: ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ[3].

## 3. ຄວາມສຳຄັນ

- **ຄວາມສຳຄັນຂອງອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ**

ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ມີຄວາມສຳຄັນຫຼາຍໃນຂັ້ນຕອນການຈັດຕັ້ງປະຕິບັດກົດໝາຍເວົ້າລວມ ແລະ ຂັ້ນຕອນໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ເປັນອົງການທີ່ຊ່ວຍໃຫ້ຄຳຕັດສິນຂອງສານໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ແລະ ມີຜົນສັກສິດຕາມທີ່ສານໄດ້ຕັດສິນ, ເປັນອົງການຊ່ວຍປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ສັງຄົມ ແລະ ຄູ່ຄວາມຕາມຄຳຕັດສິນຂອງສານ, ທັງເປັນອົງການຄຸ້ມຄອງບັນດາອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານຢູ່ ສປປ ລາວ ໃຫ້ຈັດຕັ້ງປະຕິບັດຄຳຕັດສິນຂອງສານຢ່າງເປັນເອກະພາບ ແລະ ສາມາດນຳເອົາຄຳຕັດສິນຂອງສານນຳມາຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ຖືກຕ້ອງ, ວ່ອງ ໄວ ແລະ ເປັນເອກະ

---

[2] ທ່ານ ບຸນທາ ຊົງເຢີທ່າວ, ອ້າງແລ້ວຢູ່ເລກ 1.

[3] ກົດໝາຍວ່າດ້ວຍຈັດຕັ້ງປະຕິບັດຄຳຕັດສິນຂອງສານຂອງ ສປປ ລາວ ສະບັບປັບປຸງ ປີ 2008, ມາດຕາ 09.

ພາບໃນຂອບເຂດທົ່ວປະເທດ ແລະ ເພື່ອເພີ່ມທະວີຄວາມສັກສິດຂອງອຳນາດລັດ ແລະ ກົດໝາຍ, ເປັນການປົກປ້ອງສິດຜົນປະໂຫຍດຂອງລັດ, ລວມໝູ່ ແລະ ຂອງພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມຍຸຕິທຳ.

- **ຄວາມສຳຄັນຂອງອົງການປະຕິບັດຄຳຕັດສິນຂອງສານ**

ອົງການປະຕິບັດຄຳຕັດສິນຂອງສານ ມີຄວາມສຳຄັນໃນການນຳເອົາຄຳຕັດສິນຂອງສານທີ່ມີຜົນສັກສິດ ລວມທັງຄຳຕັດສິນຂອງສານຕ່າງປະເທດ ທີ່ຮັບຮູ້ໃຫ້ຈັດຕັ້ງປະຕິບັດຢູ່ ສປປລາວ ໃຫ້ໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນຮູບປະທຳຕາມຄຳຕັດສິນຂອງສານ ແລະ ຂໍ້ກຳນົດຂອງກົດໝາຍ, ອົງການປະຕິບັດຄຳຕັດສິນຂອງສານ ເປັນອົງການທີ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳໂດຍກົງຂອງລັດ, ສັງຄົມ ແລະ ຄູ່ຄວາມຕາມຄຳຕັດສິນຂອງສານ, ຖ້າອົງການປະຕິບັດຄຳຕັດສິນຂອງສານບໍ່ເປັນເຈົ້າການໃຫ້ສັງຄົມໃນການຈັດຕັ້ງປະຕິບັດຄຳຕັກສິນຂອງສານ ກໍອາດຈະເຮັດໃຫ້ຄຳຕັດສິນຂອງສານບໍ່ໄດ້ຮັບການຈັດຕັ້ງປະຕິບັດຕາມຄຳຕັດສິນ, ສັງຄົມອາດຈະບໍ່ເຊື່ອໝັ້ນຕໍ່ກັບຜົນສັກສິດຂອງກົດໝາຍ.

ອົງການປະຕິບັດຄຳຕັດສິນຂອງສານເປັນອົງການ ເພື່ອຈັດຕັ້ງປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ທີ່ໃຊ້ຢ່າງເດັດຂາດ ແລະ ເຮັດໃຫ້ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດໄດ້ຮັບການຈັດ ຕັ້ງປະຕິບັດຢ່າງເຂັ້ມງວດ, ຖືກຕ້ອງ, ວ່ອງໄວ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບ ຮຽບຮ້ອຍ ແລະ ຍຸຕິທຳ[4].

## 4. ລະບົບອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານ ຢູ່ ສປປ ລາວ

ສປປລາວ ມີລະບົບອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານແບ່ງອອກເປັນ 03 ຂັ້ນ:

- ຂັ້ນສູນກາງ: ເປັນອົງການຄຸ້ມຄອງມະຫາພາກ ຫຼື ເອີ້ນວ່າອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ທີ່ຂຶ້ນກັບກະຊວງຍຸຕິທຳ ມີຊື່ເອີ້ນວ່າກົມຄູ້ມຄອງການປະຕິບັດຄຳຕັດສິນຂອງສານ, ມີພາລະບົດບາດໃນການຄຸ້ມຄອງວຽກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານໃນຂອບເຂດທົ່ວປະເທດ ( ລາຍລະອຽດຈະກ່ຽວກັບພາລະບົດບາດຈະສະເໜີໃນພາກຕໍ່ໄປ );
- ຂັ້ນແຂວງ: ເປັນອົງການຈຸລະພາກ ຫຼື ເອີ້ນ່ວາ ອົງການປະຕິບັດຄຳຕັດສິນຂອງສານ ທີ່ຂຶ້ນກັບພະແນກຍຸຕິທຳແຂວງ ຫຼື ເອີ້ນວ່າຫ້ອງການປະຕິບັດຄຳຕັດສິນຂອງສານ, ມີພາລະບົດບາດໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານໂດຍກົງໃນຂອບເຂດຄວາມຮັບຜິດຊອບຂອງຕົນ ( ລາຍລະອຽດຈະກ່ຽວກັບພາລະບົດບາດຈະສເໜີໃນພາກຕໍ່ໄປ );
- ຂັ້ນເມືອງ: ເປັນອົງການຈຸລະພາກ ຫຼື ເອີ້ນ່ວາ ອົງການປະຕິບັດຄຳຕັດສິນຂອງສານ ທີ່ຂຶ້ນກັບຫ້ອງການຍຸຕິທຳເມືອງ ຫຼື ເອີ້ນວ່າໜ່ວຍງານປະຕິບັດຄຳຕັດສິນຂອງສານ, ມີພາລະບົດບາດໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານໂດຍກົງໃນຂອບເຂດຄວາມຮັບຜິດຊອບຂອງຕົນ ( ລາຍລະອຽດຈະກ່ຽວກັບພາລະບົດບາດຈະສເໜີໃນພາກຕໍ່ໄປ ).

## 5. ສະຫຼຸບ:

---

[4] ຄຳແນະນຳ ຂອງລັດຖະມົນຕີກະຊວງຍຕິທຳລາວ ສະບັບເລກທີ 445/ກຍ, ລົງວັນທີ 5 ເມສາ 2019 ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂອງ ສປປ ລາວ

ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ແລະ ອົງການປະຕິບັດຄຳຕັດສິນຂອງສານແມ່ນອົງການຈັດຕັ້ງຂອງລັດທີ່ສຳຄັນຢູ່ ສປປ ລາວ, ມີບົດບາດສຳຄັນໃນການປະຕິບັດບັນດາຄຳຕັດສິນ, ຄຳຕົກລົງກ່ຽວກັບທາງແພ່ງ, ອາຍາ, ແຮງງານ, ເສດຖະກິດ; ບັນດາຄຳຕັດສິນຂອງກຳມະການຕັດສິນ ແລະ ບັນດາເຈົ້າກຳອື່ນຕາມກົດໝາຍ ເພື່ອຮັບປະກັນ, ປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ການຈັດຕັ້ງ ແລະ ລັດຖະບານ.

**References:**


1) ກົດໝາຍວ່າດ້ວຍຈັດຕັ້ງປະຕິບັດຄຳຕັດສິນຂອງສານຂອງ ສປປ ລາວ ສະບັບປັບປຸງ ປີ 2008;
2) ຄຳແນະນຳ ຂອງລັດຖະມົນຕີກະຊວງຍຕິທຳລາວ ສະບັບເລກທີ 445/ກຍ, ລົງວັນທີ 5 ເມສາ 2019 ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານຂອງ ສປປ ລາວ
3) ທ່ານ ບຸນທາ ຊົງເຢີທ່າວ, ບົດວິທະຍານິພົນທິດສະດີການເມືອງ ແລະ ການປົກຄອງ ລະບົບຊັ້ນສູງປີ 2014.